# ບົດບັນທຶກກອງປະຊຸມປຶກສາຫາລືກ່ຽວກັບເງື່ອນໄຂດ້ານສຸຂານາໄມ, ການກັກກັນ ແລະ ຂັ້ນຕອນທາງດ້ານການຄ້າ ໃນການສົ່ງອອກສັດໃຫຍ່ ຈາກ ສປປ ລາວ ໄປ ສປ ຈີນ

ເພື່ອຜັນຂະຫຍາຍອານຸສັນຍາທີ່ເຊັນກັນໃນວັນທີ 30 ເມສາ 2019 ກ່ຽວກັບຂໍ້ກຳນົດເງື່ອນໄຂດ້ານສຸຂານາໄມ ກ່ຽວກັບການກັກກັນ ແລະ ກວດກາສຸຂະພາບສັດໃຫຍ່ ທີ່ຈະສົ່ງອອກ ຈາກ ສປປ ລາວ ໄປ ສປ ຈີນ, ເພື່ອເປັນການສົ່ງເສີມການພັດທະນາ ແລະ ຄຸ້ມຄອງເຂດຄວບຄຸມພະຍາດສັດຂ້າມຊາຍແດນຕົວແບບ ໃຫ້ສຳເລັດ ແລະ ຖືກນຳໃຊ້ ພ້ອມທັງເລັ່ງດຳເນີນການສ້າງເຂດປອດພະຍາດສັດ, ກໍ່ສ້າງ ໂຄງລ່າງພື້ນຖານ, ນິຕິກຳ ແລະ ບຸກຄະລາກອນ ໃຫ້ສຳເລັດໂດຍໄວ, ກະກຽມການຕິດຕາມກວດກາທັງສອງຝ່າຍ ເພື່ອເຮັດໃຫ້ການສົ່ງອອກສັດໃຫຍ່ຈາກ ສປປ ລາວໄປ ສປປ ຈີນ ໃຫ້ປະກົດຜົນເປັນຈິງໄວຂຶ້ນ. ໃນວັນທີ 6-8 ພຶດສະພາ 2019, ນຳໂດຍ ທ່ານ ນາງ ຫວງຊານ ພະແນກການຄ້າແຂວງຢຸນນານ ໄດ້ນຳພາຄະນະທີມງານທີ່ປະກອບດ້ວຍ: ພາສີຄຸນໝິງ, ພະແນກກະສິກຳ ແລະ ຊົນນະບົດແຂວງຢຸນນານ, ພະແນກການຄ້າແຂວງຢຸນນານ, ອົງການປົກຄອງກິ່ງແຂວງສິບສອງພັນນາ, ອົງການປົກຄອງເມືອງຫຼ້າ ໄດ້ປະຊຸມປຶກສາຫາລືກ່ຽວກັບເງື່ອນໄຂດ້ານສຸຂານາໄມ, ການກັກກັນ ແລະ ຂັ້ນຕອນການຄ້າຂອງສັດໃຫຍ່ ຈາກ ສປປ ລາວ ໄປ ສປ ຈີນ. ໃນກອງປະຊຸມທັງສອງຝ່າຍ ລາວ-ຈີນ ໄດ້ຕົກລົງກ່ຽວກັບເນື້ອໃນຂອງເງື່ອນໄຂດ້ານສຸຂານາໄມ ແລະ ການກັກກັນສັດໃຫຍ່ຈາກ ສປປ ລາວ ໄປ ສປ ຈີນ ພ້ອມທັງປຶກສາຫາລືບັນຫາທີ່ກ່ຽວຂ້ອງ ຢ່າງກົງໄປກົງມາ ກ່ຽວກັບເຕັກນິກໃນການກັກກັນ ແລະ ການຄ້າຂາຍສັດໃຫຍ່ ທີ່ຈະສົ່ງອອກໄປ ສປ ຈີນ ຊຶ່ງທັງສອງຝ່າຍໄດ້ຕົກລົງເປັນເອກະພາບດ້ານເນື້ອໃນລະອຽດດັ່ງນີ້:

## I. ບັນຫາກ່ຽວກັບເງື່ອນໄຂດ້ານສຸຂານາໄມ ແລະ ການກັກກັນ ສັດໃຫຍ່ ຈາກ ສປປ ລາວ ສົ່ງອອກ ໄປ ສປ ຈີນ.

1. ຝ່າຍຈີນ ຮຽກຮ້ອງໃຫ້ ຝ່າຍລາວ ອອກກົດລະບຽບກ່ຽວກັບ ການກໍ່ສ້າງ, ການຮັກສາ ແລະ ການຈັດການເຂດປອດພະຍາດປາກເປື່ອຍລີ້ນເລັບ ໂດຍການສັກຢາວັກຊີນ ໃນຂອບເຂດ 5,6 ກິໂລຕາແມັດ ໃນ ບ້ານ ນາຄຳ, ເມືອງສີງ, ແຂວງຫຼວງນ້ຳທາ ໂດຍໄວທີ່ສຸດເທົ່າທີ່ຈະເປັນໄປໄດ້. ຝ່າຍລາວ ກ່າວວ່າຈະຮີບຮ້ອນກຳນົດກົດລະບຽບ ທີ່ກ່າວມາຂ້າງເທິງໃຫ້ລະອຽດ ແລະ ສືບຕໍ່ປັບປຸງລະບຽບການຕ່າງໆ ທີ່ກ່ຽວຂ້ອງ ໃຫ້ສົມບູນ ຄົບຖ້ວນ;
2. ຝ່າຍລາວ ຕົກລົງທີ່ຈະປະຕິບັດມາດຕະການ ການສັກຢາປ້ອງກັນພະຍາດປາກເປື່ອຍລີ້ນເລັບ ໃນພື້ນທີ່ເຂດກັນຊົນ ທີ່ຢູ່ໃນວົງລັດສະໝີ 3 ກິໂລແມັດ ຈາກເຂດປອດພະຍາດ ເພື່ອຮັບປະກັນການດຳເນີນງານ ໃນເຂດປອດພະຍາດສັດ ໃຫ້ມີຄວາມປອດໄພ;
3. ຝ່າຍລາວ ຕົກລົງກະກຽມເອກະສານ, ຂໍ້ມູນທີ່ຈຳເປັນສຳລັບການກວດກາ ແລະ ຮັບຮອງເອົາເຂດປອດພະຍາດສັດຮ່ວມກັນໂດຍໄວທີ່ສຸດ ພ້ອມທັງກໍ່ສ້າງພື້ນຖານໂຄງລ່າງທີ່ກ່ຽວຂ້ອງ ຂອງ ສູນກັກກັນສັດ ໃນເຂດ

ປອດພະຍາດສັດ ແລ້ວລາຍງານຄວາມຄືບໜ້າໃຫ້ທາງຝ່າຍຈີນຮັບຊາບ ແລະ ກຳນົດວັນເວລາ ທີ່ຈະມາກວດກາ ແລະ ຮັບຮອງເອົາສູນດັ່ງກ່າວ;

4. ຝ່າຍຈີນ ເຫັນດີຈະຊ່ວຍຝ່າຍລາວ ຝຶກອົບຮົມທາງດ້ານບຸກຄະລາກອນ ກ່ຽວກັບການປ້ອງກັນ ແລະ ກັກກັນສັດ ເຊິ່ງລາຍລະອຽດຂອງວຽກງານດັ່ງກ່າວ ຈະນຳພາໂດຍ ພະແນກການຄ້າແຂວງຢຸນນານ ແລະ ພາສີຄຸນໝິງເຊິ່ງ ພະແນກກະສິກຳ ແລະ ຊົນນະບົດ ແຂວງ ຢຸນນານ ຈະສະໜັບສະໜູນທາງດ້ານເຕັກນິກຢ່າງເຕັມທີ.
5. ຝ່າຍລາວ ມີແຜນຈະຈັດຊື້ຢາປ້ອງກັນພະຍາດປາກເປື່ອຍລີ້ງເລັບ ຜ່ານຮູບການປະມູນ ໂດຍໃຫ້ແທດເໝາະກັບສະພາບຕົວຈິງຂອງປະເທດລາວ ແລະ ໄດ້ຮັບການເຫັນດີຈາກຝ່າຍຈີນ;
6. ຝ່າຍຈີນ ເຫັນດີໃຫ້ການຮ່ວມມືໃນການສ້າງລະບົບການກວດສອບຍ້ອນຫລັງ ກ່ຽວກັບການປ້ອງກັນພະຍາດສັດ ແລະ ການແລກປ່ຽນຂໍ້ມູນຂ່າວສານຢູ່ໃນດ່ານ.

## II. ບັນຫາກ່ຽວກັບການຄ້າຂາຍສັດໃຫຍ່

7. ສອງຝ່າຍເຫັນດີຈະປະຕິບັດຕາມລະບຽບການ ນຳເຂົ້າ ແລະ ສົ່ງອອກ ສັດໃຫຍ່ ແລະ ຕາມລະບຽບການຢັ້ງຢືນແຫຼ່ງກຳເນີດສິນຄ້າ ພາຍໃຕ້ຂອບການຄ້າເສລີ ອາຊຽນ-ຈີນ. ຝ່າຍລາວ ແນະນຳໃຫ້ນັກທຸລະກິດຂອງຝ່າຍຈີນ ທີ່ມີຈຸດປະສົງຢາກຂໍໃບຢັ້ງຢືນແຫຼ່ງກຳເນີດສິນຄ້າປະເພດສັດໃຫຍ່ ສາມາດຂໍຈາກກະຊວງອຸດສາຫະກຳ ແລະ ການຄ້າ ຫຼື ສະພາການຄ້າ ແລະ ອຸດສາຫະກຳ ແຂວງ;
8. ທັງສອງຝ່າຍເຫັນດີ ເປັນເອກະພາບກ່ຽວກັບການເກັບຄ່າທຳນຽມ ການນຳເຂົ້າ-ສົ່ງອອກສັດໃຫຍ່ ໃຫ້ຖືກຕ້ອງຕາມລະບຽບການ ເພື່ອຮັບປະກັນການປະຕິບັດວຽກງານການນຳເຂົ້າ-ສົ່ງອອກໃຫ້ຄ່ອງແຄ້ວ, ຮັບປະກັນບໍ່ໃຫ້ມີການເກັບຄ່າທຳນຽມອື່ນໆ ທີ່ບໍ່ຖືກຕ້ອງຕາມລະບຽບການທີ່ກຳນົດ.
9. ອີງຕາມການຕົກລົງກັນ ລະຫວ່າງ ສອງຝ່າຍ ລາວ-ຈີນ ກ່ຽວກັບຂອບເຂດເຂດປອດພະຍາດສັດ ຝ່າຍຈີນສະເໜີໃຫ້ຝ່າຍລາວ ໃຫ້ບໍລິສັດ ໂກທົ່ງລາວ ຈຳກັດຜູ້ດຽວ ເປັນເຈົ້າການປະສານງານຮ່ວມກັບ ບໍລິສັດ ເຢຣົງລາວຈຳກັດຜູ້ດຽວ ແລະ ບໍລິສັດ ແອວເອັສເສິງຄ້າງ ການຄ້າ ລວມເປັນກຸ່ມບໍລິສັດໜຶ່ງ ຮ່ວມກັນດຳເນີນການສ້າງສູນກັກກັນ ແລະ ກວດກາສັດ ໃຫ້ຖືກຕາມເງື່ອນໄຂຂອງທັງສອງຝ່າຍໄດ້ກຳນົດໄວ້, ພ້ອມທັງໃຫ້ມອບໃຫ້ບໍລິສັດ ໂກທົ່ງລາວ ຈຳກັດຜູ້ດຽວ ດຳເນີນການຄຸ້ມຄອງ ແລະ ສະເໜີຂໍສົ່ງອອກສັດໃຫຍ່, ພ້ອມກັນນັ້ນ ທັງສອງຝ່າຍຕ້ອງອຳນວຍຄວາມສະດວກໃຫ້ແກ່ການປະຕິບັດວຽກງານດັ່ງກ່າວ ຊຶ່ງຝ່າຍຈີນຈະແຈ້ງເຈດຈຳນົງດັ່ງກ່າວເປັນລາຍລັກອັກສອນທາງການ ໃຫ້ຝ່າຍລາວ ພາຍໃນ ວັນທີ 10 ພຶດສະພາ 2019. ຝ່າຍລາວ ເຫັນດີຈະຮັບເອົາຄຳສະເໜີດັ່ງກ່າວໄປລາຍງານຂັ້ນເທິງເພື່ອພິຈາລະນາ ແລະ ຈະແຈ້ງຜົນຂອງການສະເໜີດັ່ງກ່າວໃຫ້ຝ່າຍຈີນຊາບໃຫ້ໄວເທົ່າທີ່ຈະໄວໄດ້.
10. ຝ່າຍລາວ ເຫັນດີອຳນວຍຄວາມສະດວກໃຫ້ແກ່ບໍລິສັດຈີນ ທີ່ມີການດຳເນີນທຸລະກິດ ແລະ ລົງທຶນໃນຊ່ວງທົດລອງໂຄງການຄຸ້ມຄອງເຂດປອດພະຍາດສັດຂ້າມຊາຍແດນ ໂດຍປະຕິບັດຕາມກົດໝາຍສົ່ງເສີມການລົງທຶນໃນປະຈຸບັນຂອງລາວ ທັງສອງຝ່າຍ ໄດ້ຕົກລົງສ້າງກົນໄກການປະສານງານຮ່ວມກ່ຽວກັບວຽກງານ

ດັ່ງກ່າວ ເຊິ່ງຝ່າຍຈີນໄດ້ມອບໃຫ້ຂະແໜງການອາຊຽນ ຂອງ ພະແນກການຄ້າ ແຂວງຢຸນນານ ແລະ ຝ່າຍ ລາວ ແມ່ນກົມລ້ຽງສັດ ແລະ ການປະມົງ (ພະແນກສັດຕະວະແພດ) ເປັນເຈົ້າການປະສານງານຮ່ວມ.

11. ເພື່ອຮັບປະກັນການຊຸກຍູ້ວຽກງານການດໍາເນີນງານການຄຸ້ມຄອງເຂດຄວບຄຸມພະຍາດສັດຂ້າມຊາຍແດນຕົວ ແບບ ທັງສອງຝ່າຍເຫັນດີ ສ້າງຕັ້ງກົນໄກການປະສານງານ ເຊິ່ງມີ ພາສີ ກະສິກໍາ ການຄ້າ (ສະພາການຄ້າ ແລະ ອົງການປົກຄອງທ້ອງຖິ່ນ) ກໍານົດອົງການຈັດຕັ້ງ ແລະ ຜູ້ປະສານງານໃຫ້ຊັດເຈນ ພ້ອມທັງສະເໜີໃຫ້ ກົ່ງ ແຂວງ ສິບສອງພັນນາ ແລະ ແຂວງ ຫຼວງນໍ້າທາ ນໍາພາສ້າງກົນໄກປະສານງານໃນຂັ້ນທ້ອງຖິ່ນ.

## III. ດ້ານອື່ນໆ

12. ຝ່າຍຈີນ ສົ່ງເສີມ ແລະ ຊຸກຍູ້ ຝ່າຍລາວ ເຮັດໜັງສືສະເໜີຕໍ່ ກົມໃຫຍ່ພາສີຈີນ ເພື່ອດໍາເນີນການປະເມີນ ຄວາມສ່ຽງກ່ຽວກັບຜະລິດຕະພັນສິນຄ້າກະສິກໍາ 10 ລາຍການທີ່ຈະສົ່ງອອກໄປ ສປ ຈີນ ທີ່ທາງກະຊວງ ກະສິກໍາ ແລະ ປ່າໄມ້ ໄດ້ສະເໜີໄປເພື່ອໃຫ້ກົມໃຫຍ່ພາສີຮີບຮ້ອນດໍາເນີນການປະເມີນຄວາມສ່ຽງ.

13. ຝ່າຍລາວ ໄດ້ແຈ້ງໃຫ້ ຝ່າຍຈີນ ຊາບວ່າ ໃນປີ 2019 ນີ້ ຝ່າຍລາວຈະໄດ້ເປັນເຈົ້າພາບຈັດກອງປະຊຸມກ່ຽວກັບ ໜ່ວຍງານການຄ້າ, ການເງິນ ແລະ ການທະນາຄານ ຄັ້ງທີ 3 ລະຫວ່າງ 9 ແຂວງພາກເໜືອ ສປປ ລາວ ແລະ ແຂວງ ຢຸນນານ ສປ ຈີນ ຂຶ້ນທີ່ ສປປ ລາວ ແລະ ຈະໄດ້ເຊີນ ຝ່າຍຈີນເຂົ້າຮ່ວມກອງປະຊຸມດັ່ງກ່າວ ຊຶ່ງຝ່າຍ ຈີນ ໄດ້ຕອບຮັບການເຊື້ອເຊີນດັ່ງກ່າວ ແລະ ກຽມພ້ອມທີ່ຈະເຂົ້າຮ່ວມກອງປະຊຸມ. ສໍາລັບລາຍລະອຽດ ຜູ້ ຮັບຜິດຊອບທັງສອງຝ່າຍຈະປະສານກັນພາຍຫລັງ.

14. ຝ່າຍຈີນ ຍິນດີຕ້ອນຮັບ ຝ່າຍລາວ ເຂົ້າຮ່ວມງານວາງສະແດງສິນຄ້າຈີນ-ອາຊີໃຕ້ ຊຶ່ງຝ່າຍຈີນ ຈະແຈ້ງຂໍ້ມູນໃຫ້ ຝ່າຍລາວ ຊາບໃນເວລາອັນຄວນ.

ບົດບັນທຶກຄວາມເຂົ້າໃຈສະບັບນີ້ ລົງນາມ ທີ່ ນະຄອນຊຽງຮຸ່ງ, ກົ່ງແຂວງສິບສອງພັນນາ, ໃນວັນທີ 08 ພຶດສະພາ 2019, ເປັນສອງສະບັບຄື ເປັນພາສາລາວ ແລະ ພາສາຈີນ ທັງສອງສະບັບ ມີຜົນສັກສິດເທົ່າທຽມ ກັນ.

(ລາຍຊື່ຄະນະຂອງທັງສອງຝ່າຍ ໄດ້ຄັດຕິດມາພ້ອມນີ້)

**ຕາງໜ້າຝ່າຍລາວ**



**ຕາງໜ້າຝ່າຍຈີນ**



# 老挝输华屠宰用肉牛检疫和卫生要求技术对接与商务磋商会议纪要

为贯彻落实中国海关总署和老挝工贸部于2019年4月30日在北京签署的《关于中国从老挝输入屠宰用肉牛的检疫和卫生要求议定书》精神，推动跨境动物疫病区域化管理试点工作顺利实施，加快老挝境内非疫区和相关隔离设施软硬件建设，提前做好联合验收准备工作，争取在2019年9月前实现老挝肉牛对华出口。2019年5月6日--8日，云南省商务厅黄姗巡视员率领由昆明海关、云南省农业农村厅、云南省商务厅、西双版纳州政府、勐腊县政府组成的云南省代表团，与老挝农林部养殖与渔业司长宋潘·占平赛率领的由老挝农林部、老挝工贸部、老挝财政部、南塔省农林厅组成的老挝代表团，在西双版纳州景洪市举行了老挝输华屠宰用肉牛检疫和卫生要求技术对接与商务磋商会议。

会谈中，中老双方就落实老挝输华屠宰用肉牛检疫和卫生要求议定书内容，开展输华屠宰用肉牛卫生检疫技术对接和组织肉牛进出口贸易等问题进行了坦诚交流，并就相关问题达成了一致意见。具体内容如下：

## 一、老挝输华屠宰用肉牛检疫和卫生要求技术对接问题

1.中方提请老方尽快出台关于南塔省勐新县纳坎村5.6平方公里口蹄疫免疫无疫区建设、维护和管理等方面的制度法规，老方表示将加快上述制度法规的出台进度，并进一步细化已制定的相关规定。

2.老方同意在非疫区周边三公里保护区内执行口蹄疫强制免疫措施，以确保非疫区安全运行。

3.老方同意尽快准备非疫区联合验收所需文件和资料，同时加快非疫区隔离设施等相关基础设施建设，及时向中方通报工作进度，并尽早确定考核验收时间。

4.中方同意帮助老挝培训动物疫病防控和检验检疫人员，具体工作由云南省商务厅牵头负责，昆明海关和云南省农业农村厅提供技术支持。

5.老方将根据本国口蹄疫流行情况，通过招标方式采购符合本国国情且中方认可的口蹄疫疫苗。

6.中方同意在动物疫病防控追溯体系建设和数据对接方面与老方展开合作。

## 二、关于肉牛贸易问题

7.双方同意按照中国—东盟自贸区项下原产地规则开展肉牛进出口贸易，老方建议中方企业按规定向老挝工贸部或直接向老挝省级工商联申领肉牛原产地证书。

8. 双方同意共同就肉牛进出口贸易的收费标准进行规范和统一，以保证中老肉牛进出口贸易的顺利开展，确保完成清关和检疫手续后的肉牛从老挝检疫隔离中心到中方口岸不再有其他收费行为。

9.根据中老双方已确认的非疫区划定范围，中方提请由老挝国通畜牧业发展有限公司牵头，与老挝跃洪有限商贸公司和老挝 LS 诚康公司合作组建联合体，建设一个符合中老双方卫生检疫要求的隔离检疫查验中心，并由老挝国通公司负责统一经营、管理和动物检疫出口申报工作，同时为中老双方相关工作人员提供必要的工作设施和便利条件，中方将于 5 月 10 日前以书面形式向老方说明原因，老方同意将中方意见向上级进行报告审核，并尽快以书面形式通报中方。

10.老方同意根据本国现行投资法规定，向参与跨境动物

疫病区域化管理试点工作的中方企业的投资经营活动提供便利，双方同意建立工作协调机制，云南省商务厅东盟贸易处和老挝农林部养殖与渔业司兽医处分别为双方的机制联络单位。

11.为有效推动中老跨境动物疫病区域化管理试点工作进度，双方同意成立由海关、农业、商务和地方政府组成的联络机制，明确对口单位和联络人，并提议由西双版纳州和老挝南塔省牵头建立地方层面合作机制。

**三、其他**

12.鼓励并推动老方向中国海关总署提出10种输华农产品风险评估申请，云南省将积极提供支持和协助。

13.老方邀请中方赴老挝参加滇老贸易投资财政金融工作组第三次会议，中方表示同意。

14.中方欢迎老方参加永不落幕的南博会，中方将向老方及时通报相关情况。

本备忘录于2019年5月8日在中国西双版纳州景洪市签署，一式两份，中文和老挝文同等作准。

中老双方参会人员名单附后。

老方代表

中方代表